ກະຊວງສາທາລະນະສຸກ

# ຈັນຍາບັນວິຊາຊີບ
# ສຳລັບທັນຕະແພດ

ສິງຫາ 2019

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ 0144 /ສວປ

ນະຄອນຫຼວງວຽງຈັນ, ວັນທີ 02 AUG 2019

# ຂໍ້ຕົກລົງ
# ວ່າດ້ວຍການຮັບຮອງເອົາຈັນຍາບັນວິຊາຊີບສຳລັບທັນຕະແພດ

- ອີງຕາມ ຍຸດທະສາດວ່າດ້ວຍລະບົບການອອກໃບອະນຸຍາດປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ຂອງ ສປປ ລາວ ແຕ່ປີ 2016-2025 ສະບັບເລກທີ 2098/ສທ, ລົງວັນທີ 03 ທັນວາ 2015;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 0131/ສທ, ລົງວັນທີ 19 ມັງກອນ 2017;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຄະນະກຳມະການວິຊາຊີບປິ່ນປົວດ້ານທັນຕະກຳ.

## ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ຕົກລົງ:

**ມາດຕາ 1.** ເຫັນດີຮັບຮອງເອົາ ຈັນຍາບັນວິຊາຊີບສຳລັບທັນຕະແພດ.

**ມາດຕາ 2.** ມອບໃຫ້ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ, ຄະນະກຳມະການວິຊາຊີບປິ່ນປົວດ້ານທັນຕະກຳ ເປັນໃຈກາງ ສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການເຜີຍແຜ່, ການຝຶກອົບຮົມ ຈັນຍາບັນວິຊາຊີບ ສຳລັບທັນຕະແພດສະບັບນີ້, ພ້ອມທັງຊຸກຍູ້ຕິດຕາມ ແລະ ກວດກາ ການເຄື່ອນໄຫວດ້ານຈັນຍາບັນຂອງທັນຕະ ແພດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3.** ໃຫ້ຫ້ອງການກະຊວງສາທາລະນະສຸກ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມຈັດຕັ້ງ ແລະ ພະນັກງານ, ກົມ ການສຶກສາສາທາລະນະສຸກ, ບັນດາຄະນະກຳມະການວິຊາຊີບປິ່ນປົວ(ບອດ)ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ, ມະຫາວິທະຍາໄລວິທະຍາສາດສຸຂະພາບ, ໂຮງໝໍ, ສູນ, ສະຖາບັນ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນ ປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ

<u>ບ່ອນນຳສົ່ງ:</u>

1. ປະທານ, ຮອງປະທານ ສວປ ທ່ານລະ 01 ສະບັບ
2. ຄະນະກຳມະການວິຊາຊີບປິ່ນປົວດ້ານທັນຕະກຳ ທ່ານລະ 01 ສະບັບ
3. ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ 01 ສະບັບ
4. ຫ້ອງການກະຊວງ, ກົມກອງທີ່ກ່ຽວຂ້ອງ ບ່ອນລະ 01 ສະບັບ
5. ມວສ, ໂຮງໝໍ, ສູນ ບ່ອນລະ 01 ສະບັບ
6. ສຳເນົາໄວ້ 02 ສະບັບ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ດຣ ປອນເມກ ດາລາລອຍ

# ສາລະບານ

ໜ້າ

ຄຳນຳ:........................................................................................................................1
ຈຸດປະສົງ:....................................................................................................................1
ຫຼັກການຈັນຍາບັນຂອງທັນຕະແພດ:...................................................................................1
ຈັນຍາບັນຂອງວິຊາຊີບທັນຕະກຳ:...................................................................................... 2
ຈັນຍາບັນຂອງທັນຕະແພດຕໍ່ຄົນເຈັບ:..................................................................................3
ຈັນຍາບັນຕໍ່ທັນຕະແພດດ້ວຍກັນ ແລະ ຜູ້ປະກອບວິຊາຊີບປິ່ນປົວອື່ນ:....................................................4
ຈັນຍາບັນຕໍ່ສະຖານທີ່ປິ່ນປົວທີ່ຕົນສັງກັດ:...............................................................................5
ການພັດທະນາວິຊາຊີບປິ່ນປົວແບບຕໍ່ເນື່ອງ:............................................................................5
ການອອກໃບຢັ້ງຢືນຕ່າງໆທາງການແພດ:...............................................................................5
ການປະກອບວິຊາຊີບປິ່ນປົວເອກະຊົນ:.................................................................................6
ຂໍ້ຫ້າມສຳລັບທັນຕະແພດ:...............................................................................................6
ອະທິບາຍຄຳສັບ:..........................................................................................................7

# ຈັນຍາບັນວິຊາຊີບສຳລັບທັນຕະແພດ

## ຄຳນຳ

ວິຊາຊີບດ້ານທັນຕະກຳ ເປັນວິຊາຊີບບໍລິການດ້ານສຸຂະພາບໂດຍສະເພາະກວດຕິດຕາມສຸຂະພາບຜົ້ງປາກ ແລະ ແຂ້ວດ້ວຍຄວາມຮັບຜິດຊອບ ແລະ ມີຈັນຍາບັນໃນການກວດ, ຊອກຄົ້ນຫາພະຍາດ, ບົ່ງມະຕິ, ວາງຢາ, ປະຕິບັດວິທະຍາການແພດ ແລະ ທັນຕະກຳ, ເພື່ອເຮັດໃຫ້ຄົນເຈັບໄດ້ຮັບການກັນພະຍາດ, ການສົ່ງເສີມສຸຂະພາບ, ປິ່ນປົວ ແລະ ຟື້ນຟູໜ້າທີ່ການຂອງພົນລະເມືອງ.

ໃນປັດຈຸບັນນີ້ ຄວາມຈະເລີນກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເຮັດໃຫ້ເກີດຜົນກະທົບຫຼາຍຢ່າງຕໍ່ວິທີການດຳລົງຊີວິດຂອງມະນຸດ ລວມເຖິງສະພາບຄວາມເຈັບປ່ວຍທາງດ້ານຮ່າງກາຍ ແລະ ຈິດໃຈ. ດັ່ງນັ້ນວິຊາຊີບທັນຕະກຳ ຈຶ່ງເປັນວິຊາຊີບໜຶ່ງ ທີ່ມີບົດບາດສຳຄັນໃນການແກ້ໄຂບັນຫາດັ່ງກ່າວ ແລະ ມີຄວາມຈຳເປັນຢ່າງຫຼີກລ້ຽງບໍ່ໄດ້ໃນສັງຄົມ.

ການກຳນົດຈັນຍາບັນຂອງທັນຕະແພດ ມີຈຸດປະສົງເພື່ອໃຫ້ເປັນບ່ອນອີງ ໃນການຄວບຄຸມການປະພຶດຂອງທັນຕະແພດ ຕໍ່ສັງຄົມເຊັ່ນ: ການປະຕິບັດຕໍ່ຜູ້ມາໃຊ້ບໍລິການ, ຕໍ່ທັນຕະແພດດ້ວຍກັນ, ຕໍ່ສະຖາບັນ ແລະ ອື່ນໆ, ເປັນແນວທາງໃນການຊ່ວຍຕັດສິນໃຈໃນການປິ່ນປົວໃຫ້ມີຄວາມປອດໄພ, ລວມທັງການເຄົາລົບສິດທິພື້ນຖານຂອງຄົນເຈັບ, ຄອບຄົວ ແລະ ສັງຄົມ. ນອກຈາກນີ້ຈັນຍາບັນຍັງຊ່ວຍສົ່ງເສີມມາດຕະຖານ ແລະ ຄຸນນະພາບການປິ່ນປົວ ໃຫ້ເປັນທີ່ຍອມຮັບ ແລະ ເຊື່ອຖືໄດ້.

ຈັນຍາບັນສະບັບນີ້ໄດ້ສ້າງຂຶ້ນສຳລັບທັນຕະແພດໃນ ສປປ ລາວ ຊຶ່ງປະກອບດ້ວຍ ຫຼັກການຈັນຍາບັນຂອງທັນຕະແພດ, ຈັນຍາບັນຂອງວິຊາຊີບດ້ານທັນຕະກຳ, ຈັນຍາບັນຂອງທັນຕະແພດຕໍ່ຄົນເຈັບ, ຈັນຍາບັນຕໍ່ທັນຕະແພດດ້ວຍກັນ ແລະ ຜູ້ປະກອບວິຊາຊີບປິ່ນປົວອື່ນໆ, ຈັນຍາບັນຕໍ່ສະຖານທີ່ປິ່ນປົວທີ່ຕົນສັງກັດ ພ້ອມດ້ວຍຂໍ້ຫ້າມຂອງທັນຕະແພດ.

## I. ຈຸດປະສົງ

ຈັນຍາບັນວິຊາຊີບສຳລັບທັນຕະແພດສະບັບນີ້ມີຈຸດປະສົງເພື່ອ: ກຳນົດຫຼັກການ ແລະ ມາດຕະຖານ ຈັນຍາບັນຂອງທັນຕະແພດ, ເປັນບ່ອນອີງໃຫ້ແກ່ທັນຕະແພດ ຊ່ວຍຕັດສິນໃຈປະຕິບັດຕໍ່ຜູ້ມາໃຊ້ບໍລິການ, ປົກປ້ອງຄົນເຈັບ, ຍາດພີ່ນ້ອງຂອງຄົນເຈັບ, ຜູ້ປະກອບວິຊາຊີບທັນຕະກຳ ແລະ ສັງຄົມໃຫ້ມີຄວາມປອດໄພ.

## II. ຫຼັກການຈັນຍາບັນຂອງທັນຕະແພດ

ມີດັ່ງລຸ່ມນີ້:

1. ຕ້ອງຖືວ່າກຽດສັກສີຢູ່ເໜືອຜົນປະໂຫຍດ;
2. ຕ້ອງຖືວ່າຄົນມີຄ່າເໜືອວັດຖຸ;
3. ບໍ່ຖືວ່າຄົນເຈັບເປັນໂອກາດໃຫ້ທົດລອງ;

4. ຮັກສາຄວາມລັບຂອງຄົນເຈັບ;
5. ຕ້ອງຮ່ວມມືກັບທັນຕະແພດດ້ວຍກັນ ເພື່ອຫາວິທີການປິ່ນປົວທີ່ມີປະສິດທິພາບ;
6. ໃຫ້ຢາປິ່ນປົວທີ່ແນ່ໃຈວ່າມີປະໂຫຍດແກ່ຄົນເຈັບ;
7. ໃຫ້ການປິ່ນປົວໂດຍບໍ່ມຸ້ງເນັ້ນທຸລະກິດ;
8. ຮຽນຮູ້ຕະຫຼອດຊີວິດ;
9. ໃຫ້ການປິ່ນປົວທຸກຄົນໂດຍບໍ່ຈຳແນກເຊື້ອຊາດ, ສາສະໜາ, ຊັ້ນວັນນະ ຫຼື ຖານະ;
10. ການໃຫ້ສຸຂະພາບດີເປັນການໃຫ້ທີ່ເໜືອກວ່າສິ່ງອື່ນໃດ;
11. ທັນຕະແພດ ມີສິດຮຽກຮ້ອງຕາມສິດອັນຄວນໄດ້ ແຕ່ບໍ່ແມ່ນຖືໂອກາດເລືອກໃຊ້ສະຖານະການຕໍ່ລອງ;
12. ຕ້ອງງົດເວັ້ນອະບາຍຍະມຸກທຸກຢ່າງໃນເວລາປະຕິບັດໜ້າທີ່.

## III. ຈັນຍາບັນຂອງວິຊາຊີບທັນຕະກຳ

ມີດັ່ງລຸ່ມນີ້:

1. ປະຕິບັດຕາມມາດຕະຖານເຕັກນິກການປິ່ນປົວທີ່ຖືກຮັບຮູ້ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍຄົນເຈັບຟື້ນຟູສຸຂະພາບ;
2. ເກັບຄ່າບໍລິການປິ່ນປົວທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໂດຍບໍ່ຮຽກຮ້ອງຄຸນຄ່າເພີ່ມເຕີມໃດໆ;
3. ຟັງຄວາມຄິດເຫັນ, ຈຸດປະສົງ ແລະ ການຕັດສິນໃຈຂອງຄົນເຈັບ ບົນພື້ນຖານຫຼັກວິຊາການ, ກົດໝາຍ ແລະ ລະບຽບການ;
4. ຊ່ວຍເຫຼືອຄົນເຈັບທີ່ຕົກຢູ່ໃນອັນຕະລາຍໃນເບື້ອງຕົ້ນ ບໍ່ປະຕິເສດ ດ້ວຍຄວາມບໍລິສຸດໃຈ ເມື່ອຕົນມີເງື່ອນໄຂຊ່ວຍໄດ້;
5. ລະດົມຄົນເຈັບໃຫ້ຮ່ວມມືໃນການປິ່ນປົວ ທັງໃຫ້ກຳລັງໃຈເພື່ອຜົນປະໂຫຍດຂອງຄົນເຈັບເອງເປັນຕົ້ນຕໍ, ແຕ່ຫາກບໍ່ແມ່ນເພື່ອຜົນປະໂຫຍດ ຂອງທັນຕະແພດຜູ້ປິ່ນປົວ;
6. ມີຄຸນນະທຳ, ມີຄວາມມານະອົດທົນ, ມະນຸດສຳພັນດີ, ສຸພາບຮຽບຮ້ອຍ, ບໍ່ມີອະຄະຕິ ຫຼື ປະຕິກິລິຍາຕໍ່ວາຈາ ແລະ ການສະແດງອອກ ທີ່ບໍ່ເໝາະສົມຂອງຄົນເຈັບ ແລະ ຍາດພີ່ນ້ອງຂອງເຂົາເຈົ້າ;
7. ເຄົາລົບ ແລະ ນັບຖືເພື່ອນຮ່ວມວິຊາຊີບດຽວກັນ;
8. ປະຕິບັດໜ້າທີ່ດ້ວຍຄວາມຍຸຕິທຳ, ມີສະຕິ, ມີມາລະຍາດ ແລະ ມີຄວາມຮັບຜິດຊອບສູງ;
9. ປະຕິບັດຕົນໃນສັງຄົມດ້ວຍຄວາມສຸພາບ ແລະ ເຄົາລົບຕໍ່ກົດໝາຍບ້ານເມືອງ, ບໍ່ປະພຶດໃນສິ່ງທີ່ເຊື່ອມເສຍກຽດສັກສີ, ມີເຈດຕະນາດີ, ມີມະໂນທຳ ແລະ ປະກອບວິຊາຊີບດ້ວຍຄວາມຊື່ສັດສຸດຈະລິດ;
10. ຄວນເຄົາລົບຮ່າງກາຍ, ຊີວິດ, ກຽດສັກສີ ແລະ ຄຸນຄ່າຂອງຄົນ,ໃຫ້ຄວາມເຄົາລົບສິດທິຂອງຄົນເຈັບ ໃນການເລືອກຜູ້ປິ່ນປົວຢ່າງອິດສະຫຼະ;

11. ໃຫ້ຂໍ້ມູນຂ່າວສານ ກ່ຽວກັບການສຶກສາທາງດ້ານສາທາລະນະສຸກ ທີ່ອອກສູ່ປະຊາຊົນຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນແລ້ວເທົ່ານັ້ນ, ໂດຍຄຳນຶງເຖິງຜົນກະທົບຕໍ່ປະຊາຊົນ, ຕົນເອງ ແລະ ກົມກອງ;
12. ສຶກສາຄົ້ນຄວ້າ, ວິໄຈ, ການເຈາະເລືອດ, ຜ່າຕັດອະໄວຍະວະ, ຈຸລັງ, ຫຼື ພາກສ່ວນອື່ນໆຂອງຮ່າງກາຍມະນຸດທີ່ຍັງມີຊີວິດຢູ່ ຫຼື ເສຍຊີວິດແລ້ວກໍ່ຕາມ ການກະທຳດັ່ງກ່າວລ້ວນແຕ່ເຮັດໄດ້ພາຍໃຕ້ກົດໝາຍກຳນົດ;
13. ປະຕິບັດຕາມການຮ້ອງຂໍ ໃນກໍລະນີມີການສະໝັກໃຈ ແລະ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍເທົ່ານັ້ນ, ຖ້າບໍ່ຍອມຮັບຄຳຮ້ອງຂໍ ຕ້ອງແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຮູ້;
14. ປະຕິບັດຕົນຢ່າງມີຈັນຍາບັນ, ບໍ່ປະສົງເພື່ອທຸລະກິດການຄ້າ ໃນການໂຄສະນາໂດຍບໍ່ເຈດຕະນາ ຫຼື ເຈດຕະນາກໍ່ຕາມ, ບໍ່ຄວນອະນຸຍາດໃຫ້ຄົນໃດຄົນນຶ່ງໃຊ້ຊື່ ຫຼື ຮູບຂອງຕົນເຜີຍແຜ່ເພື່ອຈຸດປະສົງດັ່ງກ່າວ;
15. ອຸປະກອນ ຫຼື ຜະລິດຕະພັນທາງທັນຕະກຳ ແລະ ການແພດ ທີ່ມີປະໂຫຍດຕໍ່ສຸຂະພາບ ແຕ່ຍັງບໍ່ໄດ້ຜ່ານການກວດສອບ ແລະ ຍັງບໍ່ໄດ້ຮັບອະນຸຍາດ ແມ່ນບໍ່ໃຫ້ນຳໃຊ້ເດັດຂາດ.

## IV. ຈັນຍາບັນຂອງທັນຕະແພດຕໍ່ຄົນເຈັບ

ມີດັ່ງລຸ່ມນີ້:

1. ເຄົາລົບສິດໃນການມີຊີວິດຂອງມະນຸດ;
2. ກ່ອນປິ່ນປົວຕ້ອງມີການເຫັນດີ, ຍິນຍອມຈາກຄົນເຈັບ ຫຼື ພີ່ນ້ອງຄົນເຈັບ;
3. ໃຫ້ການປິ່ນປົວຢ່າງສະເໝີພາບ, ຍຸດຕິທຳ, ມີຄຸນນະພາບ ແລະ ຖືກຕ້ອງຕາມຫຼັກວິທະຍາສາດທາງການແພດລວມທັງຫລັກການຂ້າເຊື້ອ, ອະເຊື້ອ ແລະ ຄວາມປອດໄພຂອງຄົນເຈັບ;
4. ສື່ສານກັບຄົນເຈັບ ຕາມຫຼັກວິຊາການຢ່າງລະອຽດແຈ່ມແຈ້ງ;
5. ປິ່ນປົວດ້ວຍຄວາມເຄົາລົບສິດ ຂອງຄົນເຈັບຕະຫຼອດເວລາ;
6. ກວດພະຍາດໃຫ້ຄົນເຈັບດ້ວຍສະຕິ ແລະ ມີຄວາມຮັບຜິດຊອບສູງ, ວ່ອງໄວ, ພ້ອມທັງບັນທຶກຂໍ້ມູນຕ່າງໆໂດຍໃຊ້ຄວາມຮູ້, ປະສົບການ, ເຄື່ອງມື ແລະ ອຸປະກອນການແພດ, ວິທະຍາສາດ ແລະ ເຕັກໂນໂລຊີທີ່ເໝາະສົມ ເພື່ອເປັນບ່ອນອີງໃຫ້ແກ່ການບົ່ງມະຕິພະຍາດທີ່ຊັດເຈນ, ກຳນົດວິທີການປິ່ນປົວ ແລະ ຊ່ວຍຟື້ນຟູສຸຂະພາບຂອງຄົນເຈັບ;
7. ກວດຄົນເຈັບ ຕ້ອງຄຳນຶງເຖິງເວລາທີ່ຈຳເປັນເພື່ອໃຫ້ໄດ້ຮັບຂໍ້ມູນ ແລະ ບົ່ງມະຕິ ໂດຍນຳໃຊ້ວິທີທາງການແພດເປັນທີ່ຍອມຮັບ;
8. ແນະນຳຄົນເຈັບ ຮູ້ກ່ຽວກັບສະພາບການເຈັບເປັນຂອງຜູ້ກ່ຽວຫຼັງຈາກກວດ, ການບົ່ງມະຕິ ພ້ອມທັງແນະນຳວິທີການປິ່ນປົວໃຫ້ຄົນເຈັບຮູ້ ແລະ ປະຕິບັດຢ່າງຖືກຕ້ອງ;
9. ພິຈາລະນາຄວາມສົມດູນຂອງຜົນປະໂຫຍດ ແລະ ຜົນເສຍທີ່ອາດຈະເກີດຂຶ້ນ;

10. ຊີ້ແຈງອະທິບາຍກ່ຽວກັບຜົນການກວດ, ການບົ່ງມະຕິ, ການກັນພະຍາດ, ການປິ່ນປົວ, ການບົວລະບັດ, ການຟື້ນຟູ, ຄວາມສ່ຽງ, ຜົນຮ້າຍ, ລະດັບຄວາມຮ້າຍແຮງ, ຄວາມຫຍຸ້ງຍາກ, ຄວາມອາດສາມາດເປັນໄປໄດ້, ວິທີການອື່ນໆ ຫຼື ທ່າອ່ຽງ ທີ່ຫຼີກລ້ຽງບໍ່ໄດ້ຈາກການປິ່ນປົວ;
11. ໃນກໍລະນີຄົນເຈັບປະຕິເສດການປິ່ນປົວ ແລະ ບໍ່ໃຫ້ການຮ່ວມມື ທັນຕະແພດຕ້ອງໃຫ້ຄວາມເຄົາລົບໃນການຕັດສິນໃຈຂອງຄົນເຈັບ, ແຕ່ຕ້ອງອະທິບາຍຜົນສະທ້ອນຂອງການປະຕິເສດດັ່ງກ່າວ, ຖ້າຫາກຄົນເຈັບບໍ່ຍິນຍອມທັນຕະແພດກໍ່ບໍ່ສາມາດປິ່ນປົວໄດ້ ໂດຍບໍ່ມີຄອບຄົວຂອງຄົນເຈັບ, ຍົກເວັ້ນໃນກໍລະນີສຸກເສີນ ຫຼື ບໍ່ສາມາດຕິດຕໍ່ຄອບຄົວຂອງຄົນເຈັບໄດ້;
12. ຂຽນໃບສັ່ງຢາໃຫ້ຖືກຕ້ອງ ຊັດເຈນ ເພື່ອໃຫ້ຄົນເຈັບ ແລະ ພີ່ນ້ອງ ສາມາດປະຕິບັດຕາມຄໍາແນະນໍາ ແນໃສ່ການປິ່ນປົວໃຫ້ດໍາເນີນໄປຢ່າງຖືກວິທີ, ຮັບປະກັນຄຸນນະພາບ ແລະ ຄວາມປອດໄພ;
13. ກໍລະນີມີການປ່ຽນແປງສະຖານທີ່ບໍລິການປິ່ນປົວ ຕ້ອງແຈ້ງຄວາມສ່ຽງກ່ຽວກັບ ສະພາບຄວາມເຈັບເປັນພ້ອມທັງສົ່ງບົດບັນທຶກການປິ່ນປົວ ໃຫ້ສະຖານທີ່ບໍລິການປິ່ນປົວບ່ອນໃໝ່;
14. ອໍານວຍຄວາມສະດວກ ໃຫ້ແກ່ຄົນເຈັບທີ່ມີປະກັນສຸຂະພາບ ແຕ່ຕ້ອງປະຕິບັດພາຍໃຕ້ເງື່ອນໄຂທີ່ກົດໝາຍກໍານົດໄວ້;
15. ມີສິດທີ່ຈະປິດບັງຄົນເຈັບກ່ຽວກັບພະຍາດ ຫຼື ມະຕິພະຍາດ ຍົກເວັ້ນກໍລະນີສ່ຽງຕໍ່ການຕິດເຊື້ອ ຫຼືແຜ່ເຊື້ອໃຫ້ຄົນອື່ນ;
16. ສະໜອງຂໍ້ມູນໃຫ້ຄົນເຈັບ ແລະ ຄອບຄົວ, ໃນກໍລະນີພະຍາດຮ້າຍແຮງຕ້ອງລະມັດລະວັງ, ຍົກເວັ້ນຄົນເຈັບບໍ່ອະນຸຍາດໃຫ້ເປີດເຜີຍ;
17. ຄົນເຈັບທີ່ມານອນປິ່ນປົວຢູ່ໂຮງໝໍຈະມີຄວາມຫຍຸ້ງຍາກລໍາບາກ ແລະ ຂາດສານອາຫານ, ຄວນໃຊ້ວິທີປິ່ນປົວທີ່ເໝາະສົມ;
18. ຖືກເຊີນໄປເບິ່ງໃນກໍລະນີພິເສດ ຫຼື ໃນຖານະປະກອບສ່ວນ, ຕ້ອງເຄົາລົບມາດຕະຖານດ້ານສຸຂະອະນາໄມ ແລະ ຄວບຄຸມການແຜ່ເຊື້ອ, ຕ້ອງແຈ້ງຄົນເຈັບ ແລະ ພີ່ນ້ອງໃຫ້ຮູ້ກ່ຽວກັບຄວາມຮັບຜິດຊອບຕົນເອງ.

## V. ຈັນຍາບັນຕໍ່ທັນຕະແພດດ້ວຍກັນ ແລະ ຜູ້ປະກອບວິຊາຊີບປິ່ນປົວອື່ນ

ມີດັ່ງລຸ່ມນີ້:

1. ມີການພົວພັນທີ່ດີກັບເພື່ອນຮ່ວມງານ ລະຫວ່າງທັນຕະແພດດ້ວຍກັນ ແລະ ຂະແໜງການປິ່ນປົວອື່ນໆ, ເສີມຂະຫຍາຍຄວາມສໍາພັນໃນການປິ່ນປົວ;
2. ສື່ສານຢ່າງຊັດເຈນ, ມີປະສິດທິຜົນ, ລະຫວ່າງການປິ່ນປົວ ແລະ ມີສ່ວນຮ່ວມໃນການຕິດຕາມຄົນເຈັບ;
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນສະຖານະການສຸກເສີນ ແລະ ພົບຄວາມຫຍຸ້ງຍາກ;
4. ມີການປຶກສາຫາລືກັບທັນຕະແພດຄົນອື່ນ ຫຼື ປຶກສາກັບທັນຕະແພດທີ່ແນະນໍາໂດຍຄົນເຈັບ ຫຼື ພີ່ນ້ອງຄົນເຈັບໃນສະຖານະການທີ່ສໍາຄັນ;

5. ບໍ່ມີການລະເມີດຂໍ້ກຳນົດ ກ່ຽວກັບການບໍລິການທາງດ້ານທັນຕະກຳຂອງໂຮງໝໍລັດ ຫຼື ເອກະຊົນ, ທັນຕະແພດທີ່ໄດ້ຮັບຜິດຊອບການປິ່ນປົວຄົນເຈັບນັ້ນ ຈະຕ້ອງໄດ້ແຈ້ງທັນຕະແພດສ່ວນຕົວ ຫຼື ພີ່ນ້ອງຄົນເຈັບທີ່ໄດ້ຮັບການອະນຸຍາດໃຫ້ປິ່ນປົວ ແລະ ຄວນແຈ້ງໃຫ້ເຂົາເຈົ້າຮູ້ກ່ຽວກັບການຕັດສິນໃຈທີ່ສຳຄັນ;
6. ຄວນໃຫ້ຂໍ້ມູນຊຶ່ງກັນ ແລະ ກັນ, ທຸກຄົນມີຫນ້າທີ່ຮັບຜິດຊອບ ແລະ ຕິດຕາມຄວາມຄືບຫນ້າຂອງການປິ່ນປົວຄົນເຈັບໃນກໍລະນີກວດ ແລະ ປິ່ນປົວຮ່ວມກັນ;
7. ຮັກສາການພົວພັນທີ່ດີກັບຜູ້ປະກອບວິຊາຊີບປິ່ນປົວອື່ນ, ໃຫ້ການເຄົາລົບເຊິ່ງກັນ ແລະ ກັນ, ເຄົາລົບໃນສິດເສລີພາບໃນການເລືອກຂອງຄົນເຈັບ ທັງນີ້ກໍເພື່ອຜົນປະໂຫຍດຂອງຄົນເຈັບເອງ;
8. ປິ່ນປົວແບບມືອາຊີບ ລະຫວ່າງເພື່ອນຮ່ວມງານ ແລະ ອື່ນໆລວມທັງໃນເວລາທີ່ນຳໃຊ້ສື່ສັງຄົມ.

## VI. ຈັນຍາບັນຕໍ່ສະຖານທີ່ປິ່ນປົວທີ່ຕົນສັງກັດ

ມີດັ່ງລຸ່ມນີ້:

1. ບໍ່ໂຄສະນາເຜີຍແຜ່ສະຖານທີ່ບໍລິການສາທາລະນະສຸກກ່ຽວກັບການວິໄຈ ຫຼື ການຮັກສາທີ່ບໍ່ໄດ້ຜ່ານການກວດສອບ ແລະ ຢັ້ງຢືນຈາກກະຊວງສາທາລະນະສຸກ;
2. ບໍ່ໂຄສະນາອຸປະກອນ, ເຄື່ອງມືທີ່ທັນສະໄໝເພື່ອຊັກຈູງໃຈໃຫ້ປະຊາຊົນເຂົ້າໃຈຜິດ ໂດຍທີ່ບໍ່ຖືກຕ້ອງຕາມຫຼັກວິຊາການທີ່ໄດ້ມາດຕະຖານ ຫຼື ເຮັດໃຫ້ປະຊາຊົນເກີດຄວາມຄາດຫວັງເກີນຄວາມເປັນຈິງ;
3. ບໍ່ໂຄສະນາລັກສະນະເປັນສື່ລາມົກ ທີ່ບໍ່ສຸພາບຕໍ່ປະຊາຊົນ ຫຼື ໂຄສະນາໃນສິ່ງທີ່ຜິດຕໍ່ສິນທຳ, ຮີດຄອງປະເພນີຂອງຊາດ.

## VII. ການພັດທະນາວິຊາຊີບປິ່ນປົວແບບຕໍ່ເນື່ອງ

ທັນຕະແພດ ຕ້ອງຍົກສູງຄວາມຮູ້ຄວາມສາມາດຂອງຕົນເອງຢ່າງຕໍ່ເນື່ອງ, ເຂົ້າຮ່ວມການຝຶກອົບຮົມ, ກິດຈະກຳ ແລະ ການປະເມີນກ່ຽວກັບຄວາມສາມາດຕົວຈິງໃນການປະຕິບັດວິຊາຊີບຂອງຕົນ ເພື່ອຍົກສູງຄຸນນະພາບຂອງການກວດ, ບົ່ງມະຕິພະຍາດ ແລະ ປິ່ນປົວໃຫ້ທັນກັບຄວາມກ້າວໜ້າທາງດ້ານວິທະຍາສາດການແພດເພື່ອຜົນປະໂຫຍດ ແລະ ຄວາມປອດໄພຂອງຄົນເຈັບ.

## VIII. ການອອກໃບຢັ້ງຢືນຕ່າງໆທາງການແພດ

ທັນຕະແພດສາມາດອອກໃບຢັ້ງຢືນທາງການແພດໄດ້ຕາມທີ່ລະບຸໃນຂ້າງລຸ່ມນີ້:

1. ໃບຢັ້ງຢືນທາງການແພດເຊັ່ນ: ໃບຢັ້ງຢືນສຸຂະພາບ, ໃບຢັ້ງຢືນເສຍອົງຄະ, ໃບນຳສົ່ງຄົນເຈັບ ແລະ ໃບຢັ້ງຢືນອື່ນໆທາງດ້ານທັນຕະກຳ ຊຶ່ງອອກໃຫ້ໂດຍທັນຕະແພດ ເພື່ອນຳໃຊ້ເປັນຫຼັກຖານ;
2. ໃບຢັ້ງຢືນທາງການແພດ ຕ້ອງໃຫ້ຖືກຕ້ອງຕາມຄວາມເປັນຈິງ, ເນື້ອໃນຂໍ້ມູນຖືກຕ້ອງຊັດເຈນ ແລະ ບໍ່ລະເວັ້ນບາງຂໍ້ມູນທີ່ກ່ຽວຂ້ອງ, ໃຫ້ຄວາມເຂົ້າໃຈ ແລະ ບໍ່ໃຫ້ຄຳເຫັນເກີນຂອບເຂດ, ໃຫ້ຫຼັກຖານຕາມຫຼັກການວິທະຍາສາດການແພດ, ແບບພິມໃບຢັ້ງຢືນທາງການແພດ ໄດ້ກຳນົດໄວ້ໃນລະບຽບການຕ່າງໆ.

## IX. ການປະກອບວິຊາຊີບປິ່ນປົວເອກະຊົນ(ຫ້ອງກວດພະຍາດເອກະຊົນ)

ຕ້ອງປະຕິບັດຄືດັ່ງນີ້:

1. ສາມາດມີຫ້ອງກວດພະຍາດບ່ອນດຽວ, ມີຫ້ອງກວດທີ່ເໝາະສົມ, ມີບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດພຽງພໍ, ປະຕິບັດຕາມມາດຕະຖານໃນການອະເຊື້ອ, ປະຕິບັດຕາມລະບຽບການ ແລະ ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ;
2. ໃນກໍລະນີເຈົ້າຂອງຫ້ອງກວດພະຍາດ ເສຍຊີວິດ, ເປັນພະຍາດຕິດຕໍ່ຮ້າຍແຮງ ຫຼື ເສຍອົງຄະ ບຸກຄົນອື່ນບໍ່ມີສິດນໍາໃຊ້ຫ້ອງກວດພະຍາດດັ່ງກ່າວ ບໍ່ວ່າຈະໃຫ້ເຊົ່າ ຫຼື ຢືມກໍ່ຕາມ ຖ້າຫາກບໍ່ໄດ້ຮັບອະນຸຍາດ ຈາກກະຊວງສາທາລະນະສຸກ.

## X. ຂໍ້ຫ້າມສໍາລັບທັນຕະແພດ

ຫ້າມທັນຕະແພດມີພຶດຕິກໍາດັ່ງລຸ່ມນີ້:

1. ບໍ່ກຽມພ້ອມປະຕິບັດໜ້າທີ່, ບໍ່ຮັບຕ້ອນຄົນເຈັບ ຫຼື ຍາດພີ່ນ້ອງ, ບໍ່ໃຫ້ຄວາມສະດວກໃນແຕ່ລະຂັ້ນຕອນຂອງການບໍລິການປິ່ນປົວ, ບໍ່ມາປະຈໍາການຕາມລະບອບການປະຈໍາການ;
2. ຢຸດເຊົາປິ່ນປົວຕາມການສະເໜີຂອງຄົນເຈັບ ແລະ ພີ່ນ້ອງຂອງຄົນເຈັບໂດຍບໍ່ມີເຫດຜົນ;
3. ເອົາຜົນກໍາໄລເປັນຕົ້ນຕໍຄືກັບການຄ້າ, ຖ່ວງດຶງຄົນເຈັບໄວ້ຍາວນານໂດຍບໍ່ຈໍາເປັນ, ໂຄສະນາເກີນຄວາມຈິງດ້ວຍຮູບການຕ່າງໆ ເພື່ອໃຫ້ຄົນເຈັບມາປິ່ນປົວນໍາຕົນ, ວິພາກວິຈານ ໃສ່ຮ້າຍປ້າຍສີການປິ່ນປົວຂອງຄົນອື່ນ;
4. ເຮັດບົດລາຍງານ ຫຼື ອອກໃບຢັ້ງຢືນການແພດ ໂດຍມີການສົມຮູ້ຮ່ວມຄິດກັບຄົນເຈັບ ຫຼື ບຸກຄົນອື່ນ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ ຊຶ່ງເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ;
5. ສົ່ງເສີມ ຫຼື ເຮັດການຊື້-ຂາຍ ຜະລິດຕະພັນ ຫຼື ອະໄວຍະວະໃດນຶ່ງຈາກຮ່າງກາຍຂອງມະນຸດ, ຂອງຄົນເຈັບເຊັ່ນ: ເລືອດ, ອົງຄະ, ຈີວະ, ຈຸລັງ ຫຼື ຜະລິດຕະພັນຈາກຮ່າງກາຍຂອງມະນຸດທີ່ຍັງມີຊີວິດຢູ່ ຫຼື ເສຍຊີວິດແລ້ວຍົກເວັ້ນກໍລະນີ ທີ່ກົດໝາຍໄດ້ກໍານົດໄວ້;
6. ດໍາເນີນບໍລິການປິ່ນປົວຢູ່ສະຖານທີ່ຕ້ອງຫ້າມເຊັ່ນ: ສູນການຄ້າ, ຕະຫຼາດ, ຮ້ານຂາຍຢາ, ຮ້ານຂາຍຜະລິດຕະພັນ, ຮ້ານຂາຍເຄື່ອງມື ແລະ ອຸປະກອນການແພດ ແລະ ສະຖານທີ່ຕ້ອງຫ້າມອື່ນທີ່ກໍານົດໄວ້ໃນກົດໝາຍ;
7. ດໍາເນີນການບໍລິການປິ່ນປົວທີ່ບໍ່ໄດ້ຮັບອະນຸຍາດ, ນໍາໃຊ້ວິທີການປິ່ນປົວທີ່ບໍ່ຖືກຮັບຮອງ ແລະ ບໍ່ສາມາກວດກາໄດ້ ຈາກກະຊວງສາທາລະນະສຸກ (ສະພາຄຸ້ມຄອງວິຊາຊີບປິ່ນປົວ);
8. ດໍາເນີນ, ຊຸກຍູ້, ສົ່ງເສີມການປິ່ນປົວທີ່ບໍ່ຖືກຕ້ອງຕາມຫຼັກວິຊາການແພດເຊັ່ນ: ການນໍາໃຊ້ເຄື່ອງມື ແລະ ເຕັກນິກປິ່ນປົວທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກກະຊວງສາທາລະນະສຸກ (ສະພາຄຸ້ມຄອງວິຊາຊີບປິ່ນປົວ).

## XI. ອະທິບາຍຄຳສັບ

1. **ຈະຣິຍະທຳ " Ethical Rules "** ໝາຍເຖິງ ກົດເກນແນວທາງຂອງການປະພຶດທີ່ມະນຸດຄວນປະພຶດສົມກັບເປັນຜູ່ທີ່ມີເຫດ, ມີຜົນ ແລະ ມີຄວາມຄິດສະຕິປັນຍາ;
2. **ຈັນຍາ " Etiquette "** ໝາຍເຖິງ ກິລິຍາມາລະຍາດ ທີ່ຄວນປະພຶດໃນໝູ່ຄະນະເຊັ່ນ: ຈັນຍາບັນຂອງທັນຕະແພດ, ຈັນຍາບັນຂອງແພດ, ຈັນຍາບັນຂອງພະຍາບານ/ຜະດຸງຄັນ ແລະ ຈັນຍາບັນຂອງຄູ...;
3. **ຈັນຍາບັນ " Code of Ethics "** ໝາຍເຖິງ ການປະມວນຄວາມປະພຶດທີ່ຜູ່ປະກອບວິຊາຊີບແຕ່ລະປະເພດກຳນົດຂຶ້ນ ເພື່ອຮັກສາກຽດ, ສື່ສຽງ ແລະ ຖານະຂອງສະມາຊິກ, ອາດຈະຂຽນເປັນລາຍລັກອັກສອນ ເຊັ່ນ: ຈັນຍາບັນແພດກໍ່ຄືການສັງລວມຄວາມປະພຶດທີ່ອີງການຈັດຕັ້ງແພດກຳນົດ ເພື່ອເປັນແນວທາງປະຕິບັດສຳລັບການປິ່ນປົວ;
4. **ສິນລະທຳ " Moral "** ໝາຍເຖິງ ຄວາມປະພຶດດີ, ຄວາມປະພຶດຖືກຕ້ອງ, ສ່ວນໃຫຍ່ແລ້ວມັກໃຊ້ໃນຄວາມໝາຍທາງສາສະໜາ ຄື ປະພຶດຕາມຫຼັກສິນທຳ;
5. **ຄຸນນະທຳ " Virtue "** ໝາຍເຖິງ ຄຸນນະພາບ, ຄຸນງາມຄວາມດີທາງຄວາມປະພຶດ ແລະ ຈິດໃຈ ເຊັ່ນ: ບໍ່ເວົ້າຕົວະ, ເສຍສະລະ, ອົດທົນ;
6. **ມະໂນທຳ " Conscience "** ໝາຍເຖິງ ຄວາມຮູ້ສຶກຜິດ, ຖືກ, ຊົ່ວ, ດີ, ຄວາມຮູ້ສຶກສິ່ງໃດຄວນເຮັດ ແລະ ບໍ່ຄວນເຮັດ;
7. **ມາລະຍາດ " Courtesy "** ໝາຍເຖິງ ການຄວບຄຸມກິລິຍາ ແລະ ວາຈາຕ່າງໆ ເຊັ່ນ: ການຢືນ, ການຍ່າງ, ການນັ່ງ, ຮັບ ແລະ ສົ່ງຂອງ, ການສະແດງຄວາມເຄົາລົບ, ການສະແດງກິລິຍາວາຈາ, ການກິນອາຫານ, ການໃຫ້ ແລະ ການຮັບບໍລິການ, ການທັກທາຍ, ການສົນທະນາ, ການໃຊ້ຄຳເວົ້າ, ການໃຊ້ເຄື່ອງມືສື່ສານລວມທັງການປະພຶດ, ການປະຕິບັດໃນພິທີການຕ່າງໆ;
8. **ສິດທິຂອງຄົນເຈັບ " Right of patient "** ໝາຍເຖິງ ສິດທິທັງຫຼາຍທີ່ຍອມຮັບກັນ ໃນປະເທດທີ່ມີອະຣິຍະທຳວ່າເປັນສິດພື້ນຖານທີ່ຈຳເປັນໃນການດຳລົງຊີວິດຢ່າງມີກຽດ ສົມກັບສັກສີຂອງຄວາມເປັນມະນຸດ ແລະ ຈຳເປັນໃນການພັດທະນາບຸກຄະລິກຂອງມະນຸດ, ເປັນສິດທິ ທີ່ມີການຄຸ້ມຄອງ ປົກປ້ອງໃນດ້ານກົດໝາຍເປັນພິເສດ, ຜູ້ໃດຈະລ່ວງລະເມີດຊຶ່ງກັນ ແລະ ກັນບໍ່ໄດ້, ມະນຸດເຮົາແຕ່ລະຄົນບໍ່ວ່າຈະເກີດມາໃນຊົນເຜົ່າ ຫຼື ຊົນຊາດໃດກໍ່ຕາມ ກໍ່ມີສິດທິສ່ວນຕົວທາງດ້ານຮ່າງກາຍ, ຄວາມເຊື່ອ ແລະການເລືອກແນວທາງການດຳລົງຊີວິດ.

ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2019

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ



ດຣ ປອນແມກ ດາລາລອຍ